ຫຼືເສຍອີງຄະ, ການນິນທາ, ການໃສ່ຮ້າຍ, ການປ້ອຍດ່າ, ການລັກເລັກຂະໂມຍນ້ອຍ, ການກະທຳຜິດຕໍ່ກຳມະສິດສ່ວນຕົວຂອງຍາດໃກ້ຊິດ, ການໝິ່ນປະໝາດຊາກສົບ ຫຼື ຊື່ສຽງຂອງຜູ້ຕາຍ, ການລ່ວງລະເມີດເຄຫາສະຖານ ແລະການລ່ວງລະເມີດຄວາມລັບສ່ວນຕົວຕໍ່ຄູ່ກໍລະນີທີ່ຂັດແຍ່ງກັນ;

6. ຊ່ວຍອົງການປົກຄອງບ້ານໃນການຄຸ້ມຄອງ, ການສ້າງຄອບຄົວ ແລະບ້ານປອດຄະດີ;
7. ຕິດຕາມ ແລະສຶກສາອົບຮົມຜູ້ທີ່ໄດ້ປະຕິບັດໂທດແລ້ວ ຫຼືຜູ້ຖືກສານຕັດສິນໂດຍບໍ່ຕັດອິດສະລະພາບ ຊຶ່ງອົງການຈັດຕັ້ງຂອງລັດ ຫຼືສານປະຊາຊົນທີ່ກ່ຽວຂ້ອງມອບໃຫ້;
8. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງອົງການປົກຄອງບ້ານ ຫຼືຫ້ອງການຍຸຕິທຳເມືອງ ທີ່ສອດຄ່ອງກັບພາລະບົດບາດຂອງຕົນ.

## ໝວດທີ IV
## ໂຄງປະກອບການຈັດຕັ້ງ

### ມາດຕາ 8. ໂຄງປະກອບດ້ານບຸກຄະລະກອນ

ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ປະກອບດ້ວຍຫົວໜ້າ 1 ຄົນ, ຮອງຫົວໜ້າ 1-2 ຄົນ ແລະກຳມະການຈຳນວນໜຶ່ງ, ຊຶ່ງມາຈາກພາກສ່ວນຕ່າງໆ ດັ່ງນີ້:

1. ແນວລາວສ້າງຊາດບ້ານ;
2. ອົງການປົກຄອງບ້ານ;
3. ສະຫະພັນນັກຮົບເກົ່າ;
4. ສະຫະພັນແມ່ຍິງບ້ານ;
5. ຊາວໜຸ່ມປະຊາຊົນປະຕິວັດລາວບ້ານ;
6. ຜູ້ຊົງຄຸນວຸດທິ ຫຼືຜູ້ຕາງໜ້າຊົນເຜົ່າໃນບ້ານ;
7. ປ ກ ສ ບ້ານ.

ນອກນີ້ ໃຫ້ມີເລຂາ 1 ຄົນ ເພື່ອຊ່ວຍວຽກ, ທັງເປັນຜູ້ບັນທຶກໃນເວລາໄກ່ເກ່ຍ ແລະຂຽນບົດສະຫຼຸບ, ບົດບັນທຶກ ແລະອື່ນໆ.

ສຳລັບການແກ້ໄຂຄະດີເດັກ ແມ່ນໃຫ້ເອົາສະມາຊິກໜ່ວຍໄກ່ເກ່ຍຈາກແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ສະຫະພັນແມ່ຍິງບ້ານ ແລະຊາວໜຸ່ມ ເປັນຜູ້ຮັບຜິດຊອບແກ້ໄຂ.

### ມາດຕາ 9. ມາດຖານຂອງຄະນະໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

ບຸກຄົນທີ່ຈະປະກອບເຂົ້າເປັນຄະນະໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຈະຕ້ອງແມ່ນຜູ້ມີມາດຖານ ດັ່ງນີ້ :

- ມີການປະພຶດເປັນແບບຢ່າງທີ່ດີ, ເປັນຜູ້ທີ່ປະຊາຊົນໄວ້ວາງໃຈ, ໃຫ້ຄວາມເຊື່ອຖື ແລະເປັນຜູ້ສັດຊື່ບໍລິສຸດຕໍ່ປະຊາຊົນ;